# ເລື່ອງຈິງ

Empowered lives.
Resilient nations.

## <u>ອ່າງເກັບນ້ຳທີ່ແຂວງໄຊຍະບູລີ</u>

*ກ່ອນໜ້ານີ້ 4 ປີ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ຈັດຕັ້ງປະຕິບັດໂຄງການຢູ່ແຂວງໄຊຍະບູລີ ເຊິ່ງຕັ້ງຢູ່ພາກເໜືອຂອງ ສປປ ລາວ ເພື່ອຊ່ວຍຊາວກະສິກອນຮັບມືກັບການປ່ຽນແປງດິນຟ້າອາກາດ. ໃນເດືອນກຸມພານີ້, ພວກເຮົາໄດ້ກັບໄປຢາມບ້ານໜຶ່ງທີ່ໄດ້ເຂົ້າຮ່ວມໂຄງການ ເພື່ອຕິດຕາມເບິ່ງວ່າພວກເຂົາມີການຈັດການແນວໃດຕໍ່ກັບເງື່ອນໄຂສະພາບອາກາດທີ່ປ່ຽນແປງໄປນັບຕັ້ງແຕ່ນັ້ນເປັນຕົ້ນມາ.*

**ນະຄອນຫຼວງວຽງຈັນ** – ເປົ້າໝາຍການພັດທະນາແບບຍືນຍົງ ເຊິ່ງໄດ້ຖືກຮັບຮອງໂດຍປະຊາຄົມໂລກໃນປີ 2015 ນັ້ນ ໄດ້ເຮັດໃຫ້ພວກເຮົາ ອົງການສະຫະປະຊາຊາດ ເພື່ອການພັດທະນາ ຕ້ອງໄດ້ມີຄວາມຮັບຜິດຊອບຫຼາຍຂຶ້ນ ເພື່ອຮັບປະກັນວ່າ ບັນດາໂຄງການຕ່າງໆຂອງພວກເຮົາບໍ່ພຽງແຕ່ໃຫ້ການຊ່ວຍເຫຼືອບັນເທົາ ຄວາມຫຍຸ້ງຍາກຂອງປະຊາຊົນໃນ ສປປ ລາວ ໃນໄລຍະຊົ່ວຄາວເທົ່ານັ້ນ ແຕ່ຍັງເປັນການສ້າງພື້ນຖານໃຫ້ແກ່ຄວາມຍືນຍົງໃຫ້ປະຊາຊົນໃນໄລຍະຍາວ ເຊິ່ງພວກເຂົາຈະສາມາດເລີ່ມສ້າງອະນາຄົດຂອງພວກເຂົາໃຫ້ມີຄວາມຍືນຍົງຫຼາຍຂຶ້ນ.

ນັ້ນເປັນເຫດຜົນທີ່ວ່າໃນເດືອນກຸມພາ 2019, ອົງການສະຫະປະຊາຊາດ ເພື່ອການພັດທະນາ ພ້ອມກັບທີມງານກອງທຶກສີຊຽວດ້ານການປ່ຽນແປງດິນຟ້າອາກາດ ແລະ ບັນດາຜູ້ຕາງໜ້າຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ເດີນທາງໄປຢ້ຽມຢາມບ້ານນາສົ້ມ ແຂວງໄຊຍະບູລີ ເພື່ອພົບປະໂອ້ລົມກັບເພື່ອນເກົ່າຈຳນວນໜຶ່ງພາຍໃຕ້ໂຄງການ "ປັບປຸງຄວາມເຂັ້ມແຂງໃນການຮັບມືກັບການປ່ຽນແປງດິນຟ້າອາກາດຂອງຂະແໜງການກະສິກຳ", ເຊິ່ງໄດ້ຮັບການຈັດຕັ້ງປະຕິບັດໃນລະຫວ່າງປີ 2011-2015.

ໃນຊ່ວງຕົ້ນຊຸມປີ 2000, ປະຊາຊົນບ້ານນາສົ້ມ ໄດ້ພົບກັບຄວາມຫຍຸ້ງຍາກໃນການປັບຕົວກັບປະກົດການທີ່ພວກເຂົາສ່ວນໃຫຍ່ອາດຈະບໍ່ເຄີຍໄດ້ຍິນມາກ່ອນ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ. ເຖິງແມ້ນວ່າບ້ານນ້ອຍໆດັ່ງກ່າວທີ່ຕັ້ງຢູ່ຮ່ອມພູທີ່ງຽບສະຫງົບລະຫວ່າງເນີນພູ ທີ່ຂຽວງາມຂອງພາກເໜືອຂອງ ລາວຈະໄດ້ຮັບຄວາມເດືອດຮ້ອນຈາກໄພນ້ຳຖ້ວມເປັນບາງໂອກາດກໍ່ຕາມ, ການຄາດຄະເນລະດູການ ໄດ້ກາຍເປັນເລື່ອງໃນອະດີດໄປແລ້ວ.

ໃນຂະນະທີ່ລະດູຝົນ ເບິ່ງຄືວ່າຝົນຈະຄ່ອຍໆມີຄວາມຮຸນແຮງຫຼາຍຂຶ້ນ, ໃນລະດູແລ້ງ ກໍຮ້ອນຫຼາຍຂຶ້ນ ແລະ ແຫ້ງແລ້ງຫຼາຍຂຶ້ນ, ເກືອບຈະບໍ່ມີນ້ຳພຽງພໍສຳລັບການເຮັດນາພາຍໃນບ້ານ ເຊິ່ງນຳໄປສູ່ການເກັບກ່ຽວທີ່ໄດ້ຮັບຜົນຜະລິດທີ່ຕ່ຳ. ເນື່ອງຈາກວ່າ ເຂົ້າເປັນສ່ວນປະກອບຫຼັກຂອງອາຫານໃນແຕ່ລະມື້ຂອງຊາວບ້ານ, ການເກັບກ່ຽວທີ່ໄດ້ຮັບຜົນຜະລິດທີ່ຕ່ຳ ຈະເຮັດໃຫ້ເກີດການຂາດສານອາຫານທີ່ຮ້າຍແຮງ. ເຖິງແມ້ນວ່າຊາວນາຈະລ້ຽງດູຊີວິດພວກເຂົາ ດ້ວຍເຂົ້າທີ່ຢູ່ໃນສາງ ໃນກໍລະນີທີ່ໄດ້ຜົນຜະລິດທີ່ແລ້ວກໍ່ຕາມ, ການທີ່ບໍ່ສາມາດນຳເຂົ້າໄປຂາຍຢູ່ໃນຕະຫຼາດທ້ອງຖິ່ນນັ້ນ ເຮັດໃຫ້ລາຍຮັບປະຈຳປີຂອງພວກເຂົາຫຼຸດລົງ.

ການມີນ້ຳຫຼາຍເກີນໄປ ຫຼື ມີນ້ຳໜ້ອຍເກີນໄປສຳລັບທົ່ງນາ ແມ່ນເປັນສິ່ງທ້າທາຍທີ່ໃຫຍ່ທີ່ສຸດສຳລັບຊາວບ້ານ. ໂຄງການທີ່ຈັດຕັ້ງປະຕິບັດໂດຍອົງການສະຫະປະຊາດ ເພື່ດການພັດທະນາ, ກອງທຶນສິ່ງແວດລ້ອມໂລກ ແລະ ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງການຄົ້ນຫາວິທີການໃໝ່ ເພື່ອໃຫ້ພວກເຂົາສາມາດຄຸ້ມຄອງ ແລະ ນຳໃຊ້ນ້ຳຝົນທີ່ຕົກລົງມາຢ່າງມີປະສິດທິພາບໃຫ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້.

ໂຄງການໄດ້ວາງແຜນຂຸດອ່າງເກັບນ້ຳຢູ່ໃນບ້ານ ເພື່ອເກັບກຳນ້ຳຝົນຕະຫຼອດປີ. ຄອງຊົນລະປະທານໄດ້ຖືກສ້າງຂຶ້ນ ເພື່ອໃຫ້ຊາວບ້ານໄດ້ຄວບຄຸມການໄຫຼຂອງນ້ຳເຂົ້າສູ່ທົ່ງນາໃນລະດູຕ່າງໆ.

ອ່າງເກັບນ້ຳດັ່ງກ່າວມີປາ ເຊິ່ງເປັນແຫຼ່ງໂປຼຕີນທີ່ມີຄຸນຄ່າສຳລັບປະຊາຊົນ. ເນື່ອງຈາກວ່າປາມັກກິນຕົວອ່ອນຂອງຍຸງທີ່ກຳລັງຖືກເພາະພັນໃນນ້ຳຂັງ, ປາເຫຼົ່ານັ້ນສາມາດຊ່ວຍປ້ອງກັນຊາວບ້ານບໍ່ໃຫ້ເປັນພະຍາດໄຂ້ມາລາເລຍໄດ້.

ເມື່ອໂຄງການສິ້ນສຸດລົງໃນປີ 2014, ໂຄງການກໍມີຜົນໄດ້ຮັບທີ່ດີ. ຊາວບ້ານບໍ່ໄດ້ອຶດຫິວອີກແລ້ວ ແລະ ພວກເຂົາຍັງສາມາດວາງແຜນການສຳລັບການເກັບກ່ຽວ ເຖິງວ່າຮູບແບບອາກາດຈະປ່ຽນແປງໄປກໍ່ຕາມ. ເຖິງຢ່າງໃດກໍ່ຕາມ, ຕາມທຳມະດາແລ້ວມັນບໍ່ເປັນເລື່ອງແປກໃນວຽກງານພັດທະນາ ທີ່ຜົນສຳເລັດດັ່ງກ່າວຄ່ອຍໆຫຼຸດລົງຕາມການເວລາ ແລະ ການຂາດງົບປະມານ ຫຼື ຄວາມຊ່ຽວຊານໃນການບຳລຸງຮັກສາຂອງຊຸມຊົນກໍລ້ວນແຕ່ເປັນສິ່ງທ້າທາຍ.

ໃນກໍລະນີນີ້, ພິສູດໃຫ້ເຫັນວ່າ ບໍ່ເປັນຄວາມຈິງ. ເຖິງແມ່ນວ່າຈະກາຍມາແລ້ວ 4 ປີ, ອ່າງເກັບນ້ຳດັ່ງກ່າວຍັງເຕັມໄປດ້ວຍນ້ຳ ແລະ ປາ. ເຖິງແມ່ນວ່າຈະມີໄພນ້ຳຖ້ວມ ໃນປີ 2018 ທີ່ເກີດຂຶ້ນຢ່າງຮ້າຍແຮງໃນແຕ່ລະແຂວງຂອງ ສປປ ລາວ, ໄພນ້ຳຖ້ວມດັ່ງກ່າວ ກໍບໍ່ສາມາດເຮັດໃຫ້ອ່າງເກັບນ້ຳມີນ້ຳລົ້ນອອກມາໄດ້.

ທ່ານ ຄຳເພົາ ເຊິ່ງເປັນໜຶ່ງໃນຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ທີ່ນຳພາພວກເຮົາຢ້ຽມຢາມອ່າງເກັບນ້ຳດັ່ງກ່າວ ໄດ້ກ່າວວ່າ "ຫຼັງຈາກຈົບໂຄງການ ພວກເຮົາມີການດຳລົງຊີວິດທີ່ດີຂຶ້ນ. ເນື່ອງຈາກວ່າພວກເຮົາໄດ້ມີນ້ຳໃຊ້ສຳລັບທົ່ງນາຢ່າງພຽງພໍ, ພວກເຮົາສາມາດຜະລິດອາຫານໄດ້ຫຼາຍຂຶ້ນກວ່າເກົ່າ".

ຜົນສຳເລັດຂອງໂຄງການດັ່ງກ່າວ ໄດ້ສ້າງຄວາມປ່ຽນແປງພາຍໃນບ້ານ: ຊາວບ້ານບາງຄົນ ກໍໄດ້ຂຸດອ່າງເກັບນ້ຳເປັນຂອງຕົນເອງ, ສ້າງຄອງຊົນລະປະທານຂອງຕົນເອງ ແລະ ລ້ຽງປາໃນອ່າງ. ດ້ວຍນ້ຳໃຈສາມັກຄີຂອງຄົນລາວ, ຊາວນາທີ່ໄດ້ຮັບຜົນປະໂຫຍດຈາກໂຄງການໃນເບື້ອງຕົ້ນ ໄດ້ອະນຸຍາດໃຫ້ຄົນອື່ນໆ ນຳໃຊ້ນ້ຳຈາກອ່າງເກັບນ້ຳຂອງພວກເຂົາ ເພື່ອສ້າງອ່າງເກັບນ້ຳນ້ອຍໆຕໍ່ໄປ. ນ້ຳນີ້ສາມາດນຳໃຊ້ເຂົ້າໃນການຜະລິດກະສິກຳໃນພື້ນທີ່ອື່ນໆອີກ. ເນື່ອງມີໂຄງການລິເລີ່ມນີ້, ຈິ່ງມີຜົນໄດ້ຮັບທີ່ດີເລີດຕາມມາ.

ຄວາມຄິດສ້າງສັນ ແລະ ການຮ່ວມມືນີ້ ເປັນສິ່ງຈຳເປັນສຳລັບການບັນລຸເປົ້າໝາຍການພັດທະນາ ໃນວາລະປີ 2030. ຊາວບ້ານ ບ້ານນາສີ້ມ ໄດ້ສະແດງໃຫ້ເຫັນວ່າ ນະວັດຕະກ□ກໍບໍ່ພຽງແຕ່ເກີດຂຶ້ນໃນຮ່ອມພູສີລິຄອນ ຫຼື ມະຫາວິທະຍາໄລລະດັບໂລກເທົ່ານັ້ນ, ແຕ່ຍັງເປັນສິ່ງທີ່ຊຸມຊົນທີ່ດ້ອຍໂອກາດຍັງສາມາດມີສ່ວນຮ່ວມໄດ້ຕາບໃດທີ່ພວກເຂົາໃຫ້ໂອກາດດັ່ງກ່າວ.